Washington State Department of Early Learning

Early Support for Infants and Toddlers

# ກົດໝາຍການສຶກສາສຳລັບບຸກຄົນທີ່ມີຄວາມເສັຽອົງຄະ (IDEA) ພາກ C ການປ້ອງກັນຄວາມປອດພັຍຕາມຫລັກການ (ສິດທິຂອງພໍ່ແມ່)

DEL 11-001a LA (Rev. 7/12)

## ຄຳແນະນຳ

ກົດໝາຍການສຶກສາສຳລັບບຸກຄົນທີ່ມີຄວາມເສັຽອົງຄະ (IDEA) ເປັນກົດໝາຍຂອງຣັດຖະບານກາງທີ່ລວມເອົາຂໍ້ກຳນົດສຳລັບການບໍຣິການເຂົ້າແຊກແຊງນຳແຕ່ເລີ້ມຕົ້ນສຳລັບເດັກທາຣົກ ແລະ ເດັກນ້ອຍກຳລັງຮຽນຍ່າງຜູ້ທີ່ມີເງື່ອນໄຂໄດ້ຮັບ (ອາຍຸແຕ່ກຳເນີດ - 36 ເດືອນ) ທີ່ມີຄວາມເສັຽອົງຄະ ແລະ ຄອບຄົວຂອງເຂົາເຈົ້າຂໍ້ກຳນົດເຫລົ່ານີ້ໄດ້ຖືກລວມຢູ່ພາຍໃຕ້ພາກ C ຂອງ IDEA. ສິ່ງເຫລົ່ານີ້ໄດ້ຖືກບັນຣະຍາຍຢູ່ໃນກົດຣະບຽບຂອງຣັດຖະບານກາງ (34 CFR Part 303) ແລະ ນະໂຍບາຍແລະວິທີການຂອງຣັດວໍຊິງຕັນ.

ຢູ່ໃນຣັດວໍຊິງຕັນ,ຣະບົບຂອງພາກ C ໄດ້ຖືກເອີ້ນວ່າໂຄງການອູ້ມຊູແຕ່ເລີ້ມ (ESIT). ຣະບົບອັນນີ້ໄດ້ຖືກອອກແບບມາເພື່ອຈະເຮັດໃຫ້ການກ່ຽວພັນນຳຂອງຄອບຄົວໃຫ້ໄດ້ສູງສຸດ ແລະ ຮັບປະກັນເອົາຄວາມຍິນຍອມຈາກພໍ່ແມ່ໃນແຕ່ລະຂັ້ນຕອນຂອງການດຳເນີນການເຂົ້າແຊກແຊງນຳແຕ່ເລີ້ມຕົ້ນ, ເລີ້ມຕົ້ນດ້ວຍການສົ່ງຕໍ່ໃນຂັ້ນຕົ້ນແລະດຳເນີນຕໍ່ໄປໂດຍຜ່ານການເອົາການບໍຣິການໃຫ້ ແລະ ການຜັນປ່ຽນຕໍ່ມາ.

ໂຄງການ ESIT ລວມເອົາການປ້ອງກັນຄວາມປອດພັຍຕາມ ຫລັກການເພື່ອຈະປ້ອງກັນພໍ່ແມ່ ແລະ ເດັກນ້ອຍຕາມທີ່ຖືກຕີຄວາມໝາຍຢູ່ພາຍໃຕ້ກົດຣະບຽບຂອງຣັດຖະບານກາງຢູ່ໃນ 34 CFR 303.400-438, ລວມທັງວິທີຮ້ອງທຸກນຳອຳນາດການປົກຄອງຢູ່ໃນ 34 CFR 303.430-438, ເພື່ອວ່າເຂົາເຈົ້າສາມາດກ່ຽວພັນນຳໄດ້ຢ່າງຈິງຈັງແລະ ມີບົດບາດໃນການນຳພາໃນການບໍຣິການທີ່ຖືກເອົາໃຫ້ແກ່ລູກຂອງເຂົາເຈົ້າ ແລະ ຄອບຄົວ. ເອກສານກ່ຽວກັບສິດທິຂອງພໍ່ແມ່ອັນນີ້ເປັນການແຈ້ງການທາງການຂອງການປ້ອງກັນຄວາມປອດພັຍຕາມຫລັກການຂອງເດັກນ້ອຍ ແລະ ຄອບຄົວຕາມທີ່ຖືກຕີຄວາມໝາຍຢູ່ພາຍໃຕ້ກົດຣະບຽບພາກC ຂອງຣັດຖະບານກາງ.

ຣາຍຣະອຽດເພີ້ມເຕີມກ່ຽວກັບການປ້ອງກັນຄວາມປອດພັຍຕາມຫລັກການຂອງເດັກນ້ອຍ ແລະ ຄອບຄົວມີໄວ້ໃຫ້ຢູ່ໂດຍຜ່ານຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ແຕ່ລະຄົນ, ແລະ ຜູ້ບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ກ່ຽວພັນນຳຂໍ້ກຳນົດສຳລັບການບໍຣິການເຂົ້າແຊກແຊງນຳແຕ່ເລີ້ມຕົ້ນ.

***ຜູ້ປະສານງານຊ່ວຍເຫລືອຄອບຄົວ* (FRCs),** *ທີ່ເຮັດວຽກນຳຄອບຄົວ,ສາມາດແນະນຳເອກສານເພີ້ມເຕີມເພື່ອຈະຊ່ວຍເຫລືອຄອບຄົວໃຫ້ເຂົ້າໃຈການປົກປ້ອງຄວາມປອດພັຍຕາມຫລັກການຂອງເຂົາເຈົ້າພາຍໃຕ້ພາກ* C. *ເຂົາເຈົ້າຍັງສາມາດແນະນຳຫົນທາງທີ່ທ່ານ ແລະ ສະມາຊິກຄອບຄົວຄົນອື່ນສາມາດເປັນເພື່ອນຮ່ວມງານນຳຜູ້ຊ່ຽວຊານເພື່ອຈະຊ່ວຍຕອບສະນອງຄວາມຕ້ອງການດ້ານການຈະເຣີນເຕີບໂຕຂອງລູກຂອງທ່ານ*.

## ການເບິ່ງທົ່ວໄປກ່ຽວກັບການປ້ອງກັນຄວາມປອດພັຍຕາມຫລັກການ (ສິດທິຂອງພໍ່ແມ່)

ພາຍໃນໂຄງການອູ້ມຊູແຕ່ເລີ້ມຕົ້ນສຳລັບເດັກທາຣົກ ແລະ ເດັກນ້ອຍກຳລັງຮຽນຍ່າງຂອງຣັດວໍຊິງຕັນ, ທ່ານ, ໃນຖານະເປັນພໍ່ແມ່, ມີສິດທິຕໍ່ລົງໄປນີ້:

- ສິດທິໃນການຕີຣາຄາ ແລະ ການປະເມີນຜົນລົງໂທດຫລາຍໆຢ່າງຕິດຕາມມາດ້ວຍການເຮັດແຜນການບໍຣິການຄອບຄົວສ່ວນບຸກຄົນ (IFSP) ໃນການປະຊຸມ IFSP ເທື່ອທຳອິດ, ພາຍໃນ 45 ວັນຕາມປະຕິທິນຈາກການສົ່ງຕໍ່.

*"ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ເໝາະສົມ" ໄດ້ຖືກພິຈາຣະນາເບິ່ງໂດຍຜ່ານການດຳເນີນການ* IFSP. IFSP *ຕ້ອງລວມເອົາການແຈ້ງການກ່ຽວກັບການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນອັນເຈາະຈົງເພື່ອຈະຕອບສະນອງຄວາມຕ້ອງການໂດຍສະເພາະຂອງເດັກນ້ອຍ ແລະ ຄອບຄົວເພື່ອຈະບັນລຸຜົນສຳເຣັດອອກມາຊຶ່ງຖືກຊີ້ບອກຢູ່ໃນ* IFSP. *ກົດຣະບຽບພາກ* C *ຂອງຣັດຖະບານກາງ* [http://www.gpo.gov/fdsys/pkg/FR-2011-09-28/pdf/2011-22783.pdf](http://www.gpo.gov/fdsys/pkg/FR-2011-09-28/pdf/2011-22783.pdf) *ຕີຄວາມໝາຍຂອງການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນວ່າເປັນການບໍຣິການທີ່ "ໄດ້ຖືກອອກແບບມາເພື່ອຈະຕອບສະນອງຄວາມຕ້ອງການດ້ານການຈະເຣີນເຕີບໂຕຂອງເດັກນ້ອຍທີ່ມີເງື່ອນໄຂໄດ້ຮັບແຕ່ລະຄົນພາຍໃຕ້ພາກ* C *ແລະ ຄວາມຕ້ອງການຂອງຄອບຄົວທີ່ກ່ຽວຂ້ອງນຳການເນັ້ນໜັກໃສ່ການຈະເຣີນເຕີບໂຕຂອງເດັກນ້ອຍ."*

- ສິດທິທີ່ຈະໄດ້ຮັບການຕີຣາຄາ, ການປະເມີນຜົນ, ການເຮັດແຜນການ IFSP, ການປະສານງານໃນການບໍຣິການ ແລະ ການປ້ອງກັນຄວາມປອດພັຍຕາມຫລັກການໂດຍບໍ່ຄິດຄ່າຕໍ່ຄອບຄົວ.
- ສິດທິທີ່ຈະໄດ້ຮັບການຕີຣາຄາ, ຖ້າຫາກວ່າທ່ານຮ້ອງຂໍເອົາ ແລະ ໃຫ້ຄຳຍິນຍອມໃຫ້ເຮັດ, ໃນທຸກໆເວລາໃນຣະຫວ່າງການດຳເນີນການກວດກັ່ນກອງ (ຖ້າຖືກໃຊ້) .
- ຖ້າມີເງື່ອນໄຂໄດ້ຮັບພາຍໃຕ້ພາກ C, ສິດທິທີ່ຈະໄດ້ຮັບການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ເໝາະສົມສຳລັບລູກຂອງທ່ານ ແລະ ຄອບຄົວຕາມທີ່ຖືກເວົ້າເຖິງຢູ່ໃນແຜນການ IFS P.
- ສິດທິທີ່ຈະປະຕິເສດການກວດກັ່ນກອງ, ການຕີຣາຄາ, ການປະເມີນຜົນ ແລະ ການບໍຣິການ.
- ສິດທິທີ່ຈະຖືກເຊີນ ແລະ ໃຫ້ເຂົ້າຮ່ວມໃນການປະຊຸມທຸກໆຢ່າງຊຶ່ງໃນນັ້ນຄຳຕັດສິນໄດ້ຖືກຄາດໝາຍວ່າຈະຖືກເຮັດອອກມາກ່ຽວກັບການວາງແຜນທີ່ຈະປ່ຽນການຊີ້ບອກຕົວ, ການຕີຣາຄາ, ຫລື ການຈັດຫາບ່ອນຢູ່ໃຫ້ເດັກນ້ອຍ, ຫລື ເງື່ອນໄຂຂອງການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ເໝາະສົມໃຫ້ແກ່ລູກຂອງທ່ານ ຫລື ຄອບຄົວ.
- ສິດທິທີ່ຈະໄດ້ຮັບໃບໜັງສືແຈ້ງການທັນຕາມເວລາກ່ອນທີ່ການປ່ຽນແປງໄດ້ຖືກວາງອອກມາ ຫລື ຖືກປະຕິເສດໃນການຊີ້ບອກຕົວ, ການຕີຣາຄາ, ການຕີຣາຄາ, ຫລື ການຈັດຫາບ່ອນຢູ່ໃຫ້ເດັກນ້ອຍ, ຫລື ເງື່ອນໄຂຂອງການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ເໝາະສົມໃຫ້ແກ່ລູກຂອງທ່ານ ຫລື ຄອບຄົວ.
- ສິດທິທີ່ຈະໄດ້ຮັບການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນໃນສະພາບແວດລ້ອມຕາມທັມມະຊາດຕາມທີ່ເໝາະເພື່ອຈະຕອບສະນອງຄວາມຕ້ອງການດ້ານການຈະເຣີນເຕີບໂຕຂອງລູກຂອງທ່ານ.
- ສິດທິທີ່ຈະຮັກສາການປົກປິດໄວ້ເປັນຄວາມລັບຂອງຣາຍຣະອຽດຊີ້ບອກສ່ວນຕົວ.
- ສິດທິທີ່ຈະເອົາມາໃດ້ໃບໂກປີ້ຕົ້ນສະບັບຂອງບັນທຶກຂອງການເຂົ້າແຊກແຊງໃນຂັ້ນເລີ້ມຕົ້ນຂອງລູກຂອງທ່ານໂດຍບໍ່ຄິດຄ່າ.
- ສິດທິທີ່ຈະໄດ້ຮັບໃບໂກປີ້ຂອງການຕີຣາຄາ, ການປະເມີນຜົນ, ແລະ ແຜນການ IFSP ທຸກໆໃບຊຶ່ງຕ້ອງໄດ້ຖືກເອົາໃຫ້ທ່ານໂດຍໄວເທົ່າທີ່ຈະໄວໄດ້ຫລັງຈາກການປະຊຸມ IFSP ແຕ່ລະເທື່ອ.
- ສິດທິທີ່ຈະກວດກາເບິ່ງ ແລະ ເບິ່ງຄືນ ແລະ, ຖ້າເໝາະສົມ, ດັດແປງບັນທຶກຂອງລູກຂອງທ່ານ.
- ສິດທິທີ່ຈະຮ້ອງຂໍເອົາການໄກ່ເກັ່ຽ ແລະ/ຫລື ການຟັງເຣື່ອງຈາກສານທີ່ບໍ່ລຳອຽງເພື່ອຈະແກ້ໄຂຄວາມຂັດແຍ້ງຂອງພໍ່ແມ່/ຜູ້ໃຫ້ການບໍຣິການ.
- ສິດທິທີ່ຈະຍື່ນຄຳຮ້ອງທຸກນຳອຳນາດການປົກຄອງ.

ເພີ້ມເຕີມໃສ່ສິດທິທີ່ຖືກກ່າວຢູ່ຂ້າງເທິງນີ້, ທ່ານມີສິດທີ່ຈະຖືກແຈ້ງບອກກ່ຽວກັບການປ້ອງກັນຄວາມປອດພັຍຕາມຫລັກການອັນເຈາະຈົງພາຍໃຕ້ພາກ C. ສິດທິເຫລົ່ານີ້ໄດ້ຖືກບັນຣະຍາຍຢູ່ຂ້າງລຸ່ມນີ້.

*ຣາຍຣະອຽດທີ່ຊີ້ບອກສ່ວນບຸກຄົນໄດ້*ລວມເອົາ: 1) *ຊື່ຂອງລູກຂອງທ່ານ, ຊື່ຂອງທ່ານ, ຫລື ຊື່ຂອງສະມາຊິກຄອບຄົວອື່ນໆ;* 2) *ທີ່ຢູ່ຂອງລູກ ຫລື ຄອບຄົວຂອງທ່ານ;* 3) *ສິ່ງຊີ້ບອກສ່ວນຕົວເຊັ່ນວ່າເລກໂຊໂຊຂອງລູກຂອງທ່ານ ຫລື ຂອງທ່ານ;* 4) *ສິ່ງຊີ້ບອກທາງອ້ອມອື່ນໆ, ເຊັ່ນວ່າວັນເກີດຂອງລູກຂອງທ່ານ, ບ່ອນເກີດ, ແລະ ຊື່ຂອງແມ່ກ່ອນແຕ່ງງານ;* 5) *ລາຍການຂອງຮູບຮ່າງລັກສະນະສ່ວນບຸກຄົນ ຫລື ຣາຍຣະອຽດອື່ນໆຊຶ່ງຈະເຮັດໃຫ້ເປັນໄປໄດ້ທີ່ຈະຊີ້ບອກຕົວລູກຂອງທ່ານດ້ວຍຄວາມແນ່ນອນສົມຄວນ; ຫລື* 6) *ຣາຍຣະອຽດທີ່ຖືກຂໍເອົາໂດຍບຸກຄົນໃດບຸກຄົນນຶ່ງຜູ້ທີ່ໂຄງການເຂົ້າແຊກແຊງແຕ່ເລີ້ມຕົ້ນເຊື່ອຢ່າງມີເຫດຜົນໄດ້ວ່າຮູ້ຈັກຮູບປະພັນປະຈຳຕົວຂອງລູກຂອງທ່ານ.*

## ໃບແຈ້ງການຂຽນໄວ້ລ່ວງໜ້າ

ໃບແຈ້ງການຂຽນໄວ້ລ່ວງໜ້າຕ້ອງໄດ້ຖືກເອົາໃຫ້ທ່ານພາຍໃນເວລາອັນເໝາະສົມກ່ອນທີ່ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຈະວາງແຜນ ຫລື ປະຕິເສດທີ່ຈະລິເລີ້ມ ຫລື ປ່ຽນບັດປະຈຳຕົວ, ການຕີຣາຄາປະເມີນຜົນ ຫລື ການຈັດຫາໃຫ້ຢູ່ຂອງລູກຂອງທ່ານ, ຫລື ເງື່ອນໄຂຂອງການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ເໝາະສົມຕໍ່ລູກຂອງທ່ານ ແລະ

ຄອບຄົວຂອງທ່ານ. ໃບແຈ້ງການຕ້ອງມີຣາຍຣະອຽດພຽງພໍເພື່ອຈະແຈ້ງບອກທ່ານກ່ຽວກັບ:

- ການກະທຳທີ່ໄດ້ຖືກວາງແຜນອອກມາ ຫລື ປະຕິເສດໂດຍຜູ້ຮັບເຫມົາການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນ ຫລື ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນ.
- ເຫດຜົນສຳລັບການເຮັດການກະທຳ.
- ການປ້ອງກັນຄວາມປອດພັຍຕາມຫລັກການທຸກໆຢ່າງທີ່ມີໄວ້ຢູ່ພາຍໃຕ້ພາກ C.
- ການເຈຣະຈາໄກ່ເກັ່ຽຂອງຣັດ, ການຮ້ອງທຸກຂອງຣັດ, ແລະວິທີການຟັງເຣື່ອງຕາມສານ, ລວມທັງການບັນຣະຍາຍກ່ຽວກັບວ່າຈະຍື່ນຄຳຮ້ອງທຸກໄດ້ຢ່າງໃດແລະກຳນົດເວລາຂອງວິທີການເຫລົ່ານີ້.

ໃບແຈ້ງການຕ້ອງຖືກຂຽນໃນພາສາທີ່ເຂົ້າໃຈໄດ້ສຳລັບສາທາຣະນະຊົນທົ່ວໄປ ແລະ ຖືກເອົາໃຫ້ໃນພາສາກຳເນີດຂອງທ່ານ, ນອກຈາກວ່າບໍ່ສາມາດເຮັດໄດ້ຢ່າງແຈ່ມແຈ້ງທີ່ຈະເຮັດດັ່ງນັ້ນ.

ຖ້າຫາກວ່າພາສາກຳເນີດຂອງທ່ານ ຫລື ແບບຂອງການຕິດຕໍ່ກັນແນວອື່ນບໍ່ແມ່ນພາສາທີ່ຂີດຂຽນໄດ້, ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຈະຕ້ອງເອົາຂັ້ນຕອນເພື່ອຈະຮັບປະກັນວ່າ:

- ໃບແຈ້ງການໄດ້ຖືກແປພາສາທາງປາກເປົ່າ ຫລື ໂດຍທາງອື່ນໃຫ້ທ່ານໃນພາສາກຳເນີດຂອງທ່ານ ຫລື ແບບຂອງການຕິດຕໍ່ກັນແນວອື່ນ;
- ທ່ານເຂົ້າໃຈໃບແຈ້ງການ; ແລະ
- ມັນມີຫລັກຖານເປັນຫນັງສືວ່າກົດກຳນົດທີ່ຖືກບັນຣະຍາຍຢູ່ໃນວິທີການເຫລົ່ານີ້ໄດ້ຖືກຕອບສະນອງໃຫ້ແລ້ວ.

## ຄຳຍິນຍອມຂອງພໍ່ແມ່

ຄຳຍິນຍອມຫມາຍຄວາມວ່າ:

- ທ່ານໄດ້ຖືກແຈ້ງບອກຫມົດທຸກຢ່າງກ່ຽວກັບຣາຍຣະອຽດທຸກໆຢ່າງກ່ຽວກັບກິຈກັມການເຄື່ອນໄຫວຊຶ່ງວ່າຄຳຍິນຍອມໄດ້ຊອກເອົາ, ເປັນພາສາກຳເນີດຂອງທ່ານເອງ;
- ທ່ານເຂົ້າໃຈ ແລະ ເຫັນພ້ອມນຳໂດຍທາງຫນັງສືໃນການດຳເນີນການເຮັດກິຈກັມການເຄື່ອນໄຫວຊຶ່ງວ່າຄຳຍິນຍອມໄດ້ຊອກເອົາ,ແລະ ຄຳຍິນຍອມບັນຣະຍາຍກິຈກັມການເຄື່ອນໄຫວ ແລະ ຂຽນລາຍການບັນທຶກການເຂົ້າແຊກແຊງແຕ່ເລີ້ມຕົ້ນ (ຖ້າມີຢູ່) ຊຶ່ງຈະຖືກເປີດເຜີຍ ແລະ ໃຫ້ໃຜ;
- ທ່ານເຂົ້າໃຈວ່າການເອົາຄຳຍິນຍອມໃຫ້ແມ່ນຕາມສະມັກໃຈໃນພາກສ່ວນຂອງທ່ານ ແລະ ອາດຈະຖືກຍົກເລີກໄດ້ໃນທຸກໆເວລາ.

ຖ້າຫາກວ່າທ່ານຍົກເລີກຄຳຍິນຍອມຂອງທ່ານ, ມັນຈະຢ້ອນກັບຄືນເມື່ອຫລັງບໍ່ໄດ້ (ມັນບໍ່ໃຊ້ໃສ່ການກະທຳຊຶ່ງໄດ້ເກີດຂຶ້ນກ່ອນທີ່ຄຳຍິນຍອມໄດ້ຖືກຍົກເລີກ) .

ຫນັງສືຄຳຍິນຍອມຂອງທ່ານຕ້ອງຖືກໄດ້ມາກ່ອນ:

- ການບໍຣິຫານການກວດກັ່ນເບິ່ງການຈະເລີນເຕີບໂຕເພື່ອຈະພິຈາຣະນາເບິ່ງວ່າລູກຂອງທ່ານໄດ້ຖືກສົງສັຍວ່າມີຄວາມເສັຽອົງຄະ ຫລື ບໍ່.
- ການດຳເນີນການຕີຣາຄາ ແລະ ການປະເມີນຜົນຂອງລູກຂອງທ່ານ.
- ການໃຫ້ການບໍຣິການເຂົ້າແຊກແຊງແຕ່ຂັ້ນເລີ້ມຕົ້ນແກ່ລູກຂອງທ່ານ.
- ການໃຊ້ການຊ່ວຍເຫລືອຂອງຫລວງ ຫລື ປະກັນພັຍ ຫລື ປະກັນພັຍເອກຊົນເພື່ອຈະຈ່າຍສຳລັບການບໍຣິການ.

> *__ພາສາກຳເນີດ,__ ເມື່ອຖືກໃຊ້ເພື່ອຈະອີງໃສ່ບຸກຄົນທີ່ມີຄວາມຊຳນານດ້ານພາສາອັງກິດທີ່ຈຳກັດ, ຫມາຍຄວາມເຖິງພາສາທີ່ຖືກໃຊ້ເປັນປະຈຳໂດຍທ່ານ. ເມື່ອເວລາທຳການຕີຣາຄາ ແລະ ການປະເມີນຜົນຂອງລູກຂອງທ່ານ, ພາສາກຳເນີດຫມາຍເຖິງພາສາທີ່ຖືກໃຊ້ເປັນປະຈຳໂດຍລູກຂອງທ່ານ. ເມື່ອເວລາຖືກໃຊ້ດ້ວຍຄວາມນັບຖືໃສ່ບຸກຄົນຜູ້ທີ່ຫູຫນວກ ຫລື ມີຄວາມຫຍຸ້ງຍາກນຳການຟັງສຽງ, ຄົນຕາບອດ ຫລື ເບິ່ງບໍ່ເຫັນຮຸ່ງ, ຫລື ສຳລັບບຸກຄົນທີ່ບໍ່ມີພາສາຂີດຂຽນ, ພາສາກຳເນີດຫມາຍເຖິງແບບການຕິດຕໍ່ທີ່ຖືກໃຊ້ຕາມປົກກະຕິໂດຍບຸກຄົນນັ້ນ (ເຊັ່ນວ່າພາສາໃບ້, ຕົວພິມໃຫຍ່,ຫລື ການຕິດຕໍ່ທາງປາກເປົ່າ) .*

- ການແລກປ່ຽນຣາຍຣະອຽດຊີ້ບອກສ່ວນບຸກຄົນກ່ຽວກັບທ່ານ ແລະ ລູກຂອງທ່ານ.

ຫນັງສືຄຳຍິນຍອມຂອງທ່ານຕ້ອງຖືກເອົາມາກ່ອນທີ່ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຈະຖືກເອົາໃຫ້.

ຖ້າຫາກວ່າທ່ານບໍ່ເອົາຄຳຍິນຍອມໃຫ້, ບໍ່ມີການກະທຳແນວໃດຈະຖືກເຮັດລົງໄປເພື່ອຈະຂົ່ມຂູ່ (ບັງຄັບ) ທ່ານ. ເວົ້າອີກແນວນຶ່ງ, ຜູ້ປະສານງານການຊ່ວຍເຫລືອຄອບຄົວ (FRC), ຫລື ຜູ້ບໍຣິການການເຂົ້າແຊກແຊງແຕ່ເລີ້ມຕົ້ນຈະບໍ່ໃຊ້ວິທີການຟັງເຣື່ອງຕາມການດຳເນີນການຂອງສານເພື່ອຈະແກ້ການປະຕິເສດຂອງທ່ານທີ່ຈະເອົາຄຳຍິນຍອມໃຫ້.

ຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC), ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນ ຫລື ພະນັກງານທີ່ມີຄຸນນະວຸດທິພຽງພໍຈະທຳຄວາມພະຍາຍາມອັນເຫມາະສົມເພື່ອຈະຮັບປະກັນວ່າທ່ານ:

- ຮູ້ຈັກຫມົດທຸກຢ່າງກ່ຽວກັບສະພາບຂອງການກວດກັ່ນເບິ່ງ, ການຕີຣາຄາ ແລະ ການປະເມີນຜົນ ຫລື ການບໍຣິການທີ່ອາດຈະມີໄວ້ໃຫ້.
- ເຂົ້າໃຈວ່າລູກຂອງທ່ານບໍ່ສາມາດທີ່ຈະໄດ້ຮັບການກວດກັ່ນເບິ່ງ, ການຕີຣາຄາ ແລະ ການປະເມີນຜົນ ຫລື ການບໍຣິການນອກຈາກວ່າຄຳຍິນຍອມໄດ້ຖືກເອົາໃຫ້.

ໃນຖານະເປັນພໍ່ແມ່ຂອງເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບພາຍໃຕ້ພາກ C, ທ່ານອາດຈະພົບວ່າລູກຂອງທ່ານ ຫລື ສະມາຊິກຄອບຄົວຄົນອື່ນຈະຮັບເອົາ ຫລື ປະຕິເສດການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນພາຍໃຕ້ໂຄງການອັນນີ້ຫລື ບໍ່. ທ່ານຍັງຈະປະຕິເສດບໍ່ຮັບເອົາການບໍຣິການອັນນັ້ນໄດ້ອີກຄືກັນ (ຍົກເວັ້ນແຕ່ຫນ້າທີ່ການປົກຄອງທີ່ຕ້ອງມີພາຍໃຕ້ກົດຣະບຽບສຳລັບການປະສານງານຊ່ວຍເຫລືອຄອບຄົວ) ຫລັງຈາກຮັບເອົາກ່ອນໂດຍບໍ່ໄດ້ທຳຮ້າຍການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນແນວອື່ນພາຍໃຕ້ໂຄງການ ESIT.

## ບັນທຶກເອກສານ

### ການປົກປິດໄວ້ເປັນຄວາມລັບ

ໂດຍການສອດຄ່ອງນຳວິທີການຂອງການປົກປິດໄວ້ເປັນຄວາມລັບໃນຣາຍຣະອຽດທີ່ຖືກກ່າວລົງໄປໃນເອກສານອັນນີ້,ທ່ານຕ້ອງຖືກເອົາໂອກາດໃຫ້ເພື່ອຈະກວດກາເບິ່ງ ແລະ ເບິ່ງຄືນບັນທຶກຕ່າງໆທີ່ກ່ຽວຂ້ອງນຳການກວດກັ່ນເບິ່ງ, ການຕີຣາຄາ ແລະ ການປະເມີນຜົນ, ການພິຈາຣະນາເບິ່ງເງື່ອນໄຂໄດ້ຮັບ, ການເຮັດອອກມາ ແລະ ການວາງໃຊ້ຂອງໂຄງການ IFSPs, ເງື່ອນໄຂຂອງການບໍຣິການເຂົ້າແຊກແຊງແຕ່ເລີ້ມແຮກ, ຄຳຮ້ອງທຸກສ່ວນບຸກຄົນກ່ຽວກັບລູກຂອງທ່ານ, ແລະ ພາກສ່ວນອື່ນທຸກໆຢ່າງຂອງໂຄງການພາກ C ທີ່ກ່ຽວນຳບັນທຶກກ່ຽວກັບລູກຂອງທ່ານ ແລະ ຄອບຄົວຂອງທ່ານ..

ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນແຕ່ລະຄົນຕ້ອງເອົາໂອກາດໃຫ້ທ່ານທີ່ຈະກວດກາເບິ່ງ ແລະ ເບິ່ງຄືນ (ໃນຣະຫວ່າງຊົ່ວໂມງເຮັດການ) ບັນທຶກຕ່າງໆທີ່ກ່ຽວນຳລູກຂອງທ່ານ ຫລື ຄອບຄົວຊຶ່ງໄດ້ຖືກເກັບກຳມາ, ຮັກສາໄວ້ ຫລືຖືກໃຊ້ໂດຍຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການພາຍໃຕ້ພາກ C ຕັ້ງແຕ່ຈຸດເວລາເມື່ອລູກຂອງທ່ານໄດ້ຖືກສົ່ງຕໍ່ໄປເອົາການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຈົນກວ່າຮອດຕໍ່ມາເມື່ອເວລາຫ້ອງການທີ່ເຂົ້າຮ່ວມບໍ່ໄດ້ຖືກບົ່ງຕໍ່ໄປອີກແລ້ວໃຫ້ເກັບຮັກສາໄວ້ ຫລື ບໍ່ເກັບຮັກສາຣາຍຣະອຽດໄວ້ຕໍ່ໄປອີກແລ້ວພາຍໃຕ້ກົດຫມາຍຂອງຣັດຖະບານກາງ ແລະ ຂອງຣັດທີ່ກ່ຽວຂ້ອງນຳ. ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຕ້ອງປະຕິບັດຕາມນຳຄຳຮ້ອງຂໍໂດຍປາສຈາກການຊັກຊ້າອັນບໍ່ຈຳເປັນ ແລະ ກ່ອນການປະຊຸມກັນທຸກໆຢ່າງກ່ຽວກັບແຜນການ IFSP ຫລື ການຟັງເຣື່ອງທີ່ກ່ຽວພັນນຳບັດປະຈຳຕົວ, ການຕີຣາຄາ, ການຈັດຫາໃຫ້ຢູ່, ຫລື ເງື່ອນໄຂຂອງການບໍຣິການສຳລັບລູກຂອງທ່ານ ແລະ ຄອບຄົວຂອງທ່ານ, ແລະ, ບໍ່ມີກໍຣະນີໃດ, ຫລາຍເກີນກວ່າ 10 ວັນຕາມປະຕິທິນຫລັງຈາກທີ່ຄຳຮ້ອງຂໍໄດ້ຖືກເຮັດ. ໂອກາດທີ່ຈະກວດກາເບິ່ງ ຫລື ເບິ່ງຄືນໃນບັນທຶກການເຂົ້າແຊກແຊງແຕ່ເລີ້ມຕົ້ນລວມເອົາ:

- ສິດທິທີ່ຈະໄດ້ຮັບຄຳຕອບຈາກຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຕໍ່ຄຳຮ້ອງຂໍທີ່ມີເຫດຜົນສຳລັບການອະທິບາຍ ແລະ ການຕີຄວາມຫມາຍຂອງບັນທຶກ.
- ສິດທິທີ່ຈະຮ້ອງຂໍໃຫ້ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ຈະເອົາບັນທຶກໃຫ້ຊຶ່ງບັນຈຸຣາຍຣະອຽດ, ຖ້າຫາກວ່າຄວາມຜິດພາດທີ່ຈະເອົາໂກປີເຫລົ່ານີ້ໃຫ້ຈະກີດກັ້ນທ່ານຢ່າງເປັນຜົນສຳເຣັດຈາກການວາງໃຊ້ໂອກາດທີ່ຈະກວດກາເບິ່ງ ແລະ ເບິ່ງບັນທຶກຄືນ.
- ສິດທິທີ່ຈະໃຫ້ຄົນໃດຄົນນຶ່ງຜູ້ທີ່ເປັນຕົວແທນທ່ານທີ່ຈະກວດກາເບິ່ງ ແລະ ເບິ່ງບັນທຶກຄືນ.

ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນອາດຈະລົງຄວາມເຫັນວ່າທ່ານມີສິດອຳນາດທີ່ຈະກວດກາເບິ່ງ ແລະ ເບິ່ງບັນທຶກຄືນຊຶ່ງກ່ຽວພັນນຳລູກຂອງທ່ານນອກຈາກວ່າຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການໄດ້ຖືກແນະນຳບອກວ່າທ່ານບໍ່ມີສິດອຳນາດພາຍໃຕ້ກົດຫມາຍຂອງຣັດທີ່ກ່ຽວຂ້ອງນຳ ຫລື ຄຳສັ່ງຈາກສານທີ່ປົກຄອງເຣື່ອງຕ່າງໆເຊັ່ນວ່າການເປັນຜູ້ປົກຄອງ, ການແຍກທາງກັນ ແລະ ການຢ່າຮ້າງ.

ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ລະຄົນຄວນຈະເກັບຮັກສາຫນັງສືບັນທຶກຂອງທຸກຝ່າຍທີ່ເກັບກຳເອົາບັນທຶກທີ່ຖືກເກັບກຳເອົາ, ຖືກເອົາມາ ຫລື ຖືກໃຊ້ພາຍໃຕ້ພາກ C (ຍົກເວັ້ນແຕ່ການເຂົ້າເຖິງໂດຍພໍ່ແມ່ ແລະ ພະນັກງານຜູ້ທີ່ຖືກອະນຸຍາດຂອງຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການຄົນນັ້ນ) , ລວມທັງຊື່ຂອງພາກສ່ວນ, ວັນທີທີ່ການເຂົ້າເຖິງໄດ້ຖືກເອົາໃຫ້, ແລະ ຈຸດປະສົງຊຶ່ງພາກສ່ວນໄດ້ຖືກອະນຸຍາດໃຫ້ໃຊ້ບັນທຶກຂອງເດັກນ້ອຍ.

ຖ້າຫາກວ່າບັນທຶກຂອງການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນອັນໃດອັນນຶ່ງລວມເອົາຣາຍຣະອຽດກ່ຽວກັບເດັກນ້ອຍຫລາຍກວ່າຄົນນຶ່ງ, ທ່ານອາດຈະກວດເບິ່ງ ແລະ ເບິ່ງຄືນຣາຍຣະອຽດທີ່ກ່ຽວພັນນຳລູກຂອງທ່ານເທົ່ານັ້ນ,ຫລື ທ່ານ, ຫລື ທີ່ຈະຖືກແຈ້ງບອກກ່ຽວກັບຣາຍຣະອຽດອັນເຈາະຈົງອັນນັ້ນ.

ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ລະຄົນຄວນຈະເອົາໃຫ້ທ່ານ, ຕາມຄຳຮ້ອງຂໍ, ລາຍຊື່ຂອງຊະນິດ ແລະ ສະຖານທີ່ຂອງບັນທຶກກ່ຽວກັບການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ຖືກເກັບກຳເອົາມາ, ຮັກສາເອົາໄວ້, ຫລື ຖືກໃຊ້ໂດຍຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການເຂົ້າແຊກແຊງອາດຈະເກັບເອົາເງິນຄ່າທຳນຽມສຳລັບໂກປີຂອງບັນທຶກຊຶ່ງໄດ້ຖືກເຮັດໃຫ້ສຳລັບພໍ່ແມ່ພາຍໃຕ້ພາກ C ຖ້າຫາກວ່າຄ່າທຳນຽມບໍ່ກີດກັ້ນທ່ານ ຢ່າງເປັນຜົນສຳເຣັດຈາກການລອງໃຊ້ໂອກາດຂອງທ່ານທີ່ຈະ ກວດກາເບິ່ງ ແລະ ເບິ່ງຣາຍຣະອຽດເຫລົ່ານີ້ຄືນ. ເຖິງຢ່າງໃດກໍຕາມ, ເຂົາເຈົ້າອາດຈະບໍ່ເກັບເອົາເງິນຄ່າທຳນຽມເພື່ອຈະຊອກຫາ ຫລື ດຶງເອົາຣາຍຣະອຽດອອກມາພາຍໃຕ້ພາກ C. ເພີ້ມເຕີມອີກ, ທ່ານຍັງຈະຕ້ອງຖືກເອົາໃຫ້ອີກຄືກັນໂດຍບໍ່ຄິດຄ່າແນວໃດໂກປີຂອງການ

ຕີຣາຄາແຕ່ລະອັນ, ການປະເມີນຜົນຂອງເດັກນ້ອຍ, ການປະເມີນຜົນຄອບຄົວ, ແລະ ແຜນການ IFSP ໂດຍໄວເທົ່າທີ່ຈະເປັນໄປໄດ້ຫລັງຈາກການປະຊຸມ IFSP ແຕ່ລະເທື່ອ.

ຖ້າຫາກວ່າທ່ານເຊື່ອວ່າຣາຍຣະອຽດຢູ່ໃນບັນທຶກຂອງການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ຖືກເກັບກຳເອົາມາ, ຖືກຮັກສາເອົາໄວ້, ຫລື ຖືກໃຊ້ພາຍໃຕ້ພາກ C ແມ່ນບໍ່ຖືກຕ້ອງ ຫລື ຊີ້ນຳໄປໃນທາງຜິດ, ຫລື ລ່ວງລະເມີດການປົກປິດໄວ້ເປັນຄວາມລັບ ຫລື ສິດທິແນວອື່ນຂອງທ່ານ ຫລື ລູກຂອງທ່ານ, ທ່ານອາດຈະຮ້ອງຂໍໃຫ້ຜູ້ໃຫ້ການບໍຣິການເຂົ້າແຊກແຊງຜູ້ທີ່ເກັບຮັກສາຣາຍຣະອຽດໄວ້ທີ່ຈະດັດແປງຣາຍຣະອຽດ.

- ຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການຄົນນັ້ນຕ້ອງຕັດສິນໃຈວ່າຈະດັດແປງຣາຍຣະອຽດ ຫລື ບໍ່ເພື່ອຈະໃຫ້ສອດຄ່ອງນຳຄຳຮ້ອງຂໍພາຍໃນຣະຍະເວລາອັນເຫມາະສົມຫລັງຈາກທີ່ເອົາໄດ້ຮັບຄຳຮ້ອງຂໍແລ້ວ.
- ຖ້າຫາກວ່າຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການຄົນນັ້ນປະຕິເສດທີ່ຈະດັດແປງຣາຍຣະອຽດຕາມທີ່ທ່ານຮ້ອງຂໍເອົາ, ທ່ານຕ້ອງຖືກແຈ້ງບອກກ່ຽວກັບການປະຕິເສດ ແລະ ຖືກແນະນຳບອກກ່ຽວກັບສິດທິໃນການຟັງເຣື່ອງ.

ຜູ້ໃຫ້ການບໍຣິການເຂົ້າແຊກແຊງ, ຕາມຄຳຮ້ອງຂໍ, ຕ້ອງເອົາໂອກາດໃຫ້ສຳລັບການຟັງເຣື່ອງເພື່ອຈະຄັດຄ້ານຣາຍຣະອຽດຢູ່ໃນບັນທຶກການເຂົ້າແຊກແຊງແຕ່ເລີ້ມຕົ້ນເພື່ອຈະຮັບປະກັນວ່າມັນບໍ່ແມ່ນບໍ່ຖືກຕ້ອງ, ຊີ້ນຳໄປໃນທາງຜິດ, ຫລື ບໍ່ດັ່ງນັ້ນໃນການລ່ວງລະເມີດການປົກປິດໄວ້ເປັນສ່ວນຕົວ ຫລື ສິດທິຂອງທ່ານ ແລະ ເດັກນ້ອຍແນວອື່ນ. ທ່ານຈະຮ້ອງຂໍເອົາການຟັງເຣື່ອງອີງຕາມສານພາຍໃຕ້ວິທີການຂອງພາກ C ຫລື ວິທີການຟັງເຣື່ອງຊຶ່ງສອດຄ່ອງນຳກົດຣະບຽບຂອງກົດຫມາຍສິດທິ ແລະ ການປົກປິດໄວ້ເປັນຄວາມລັບໃນການສຶກສາຂອງຄອບຄົວ (FERPA) ຢູ່ໃນ 34 CFR 99.22.

*ການຕີຄວາມຫມາຍ*ຕໍ່ລົງໄປນີ້ໄດ້ຖືກໃຊ້ຢູ່ໃນພາກສ່ວນນີ້: (1) ***"ການທຳລາຍ"*** ຫມາຍເຖິງການທຳລາຍ ຫລື ການເອົາອອກໂດຍທາງຮູບຮ່າງໃນສິ່ງຊີ້ບອກສ່ວນຕົວຈາກຣາຍຣະອຽດເພື່ອຈະຮັບປະກັນວ່າມັນຈະບໍ່ສາມາດຊີ້ບອກສ່ວນບຸກຄົນໄດ້ຕໍ່ໄປອີກແລ້ວ; (2) ***"ບັນທຶກການເຂົ້າແຊກແຊງແຕ່ເລີ້ມຕົ້ນ"***, ***"ບັນທຶກການສຶກສາ"*** ຫລື ***"ບັນທຶກ"*** *ຫມາຍເຖິງບັນທຶກທຸກໆຢ່າງກ່ຽວກັບເດັກນ້ອຍທີ່ຕ້ອງຖືກເກັບກຳເອົາມາ,ຮັກສາເອົາໄວ້ ຫລື ຖືກໃຊ້ພາຍໃຕ້ພາກ C; ແລະ* (3) ***"ຫ້ອງການເຂົ້າຮ່ວມ"*** *ຫມາຍເຖິງບຸກຄົນໃດບຸກຄົນນຶ່ງ, ຫ້ອງການ, ບ່ອນໃດບ່ອນນຶ່ງ ຫລື ສະຖາບັນບ່ອນໃດບ່ອນນຶ່ງທີ່ເກັບກຳເອົາ, ຮັກສາເອົາໄວ້, ຫລື ໃຊ້ຣາຍຣະອຽດທີ່ຊີ້ບອກສ່ວນບຸກຄົນໄດ້ເພື່ອຈະວາງໃຊ້ກົດກຳນົດຢູ່ໃນພາກ C. ຫ້ອງການທີ່ເຂົ້າຮ່ວມລວມເອົາຫ້ອງການນຳພາຂອງຣັດ, ຜູ້ບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນແຕ່ລະຄົນຜູ້ທີ່ໃຫ້ການບໍຣິການຂອງພາກ C (ລວມເອົາການປະສານງານການບໍຣິການ, ການຕີຣາຄາ ແລະ ການປະເມີນຜົນ ແລະ ການບໍຣິການພາກ C ອື່ນໆ). ມັນບໍ່ລວມເອົາແຫລ່ງສິ່ງຕໍ່ທຳອິດ ຫລື ຫ້ອງການຫລວງ ຫລື ເອກະຊົນຊຶ່ງໃຫ້ເງິນທຶນການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນ.*

- ຖ້າຫາກວ່າ, ເນື່ອງເປັນຜົນອອກມາຂອງການຟັງເຣື່ອງ, ຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການຄົນນັ້ນຕັດສິນວ່າຣາຍຣະອຽດບໍ່ຖືກຕ້ອງ, ນຳພາໃຫ້ເຊື່ອໄປໃນທາງຜິດ, ຫລື ບໍ່ດັ່ງນັ້ນເປັນການລ່ວງລະເມີດສິດທິສ່ວນຕົວ ຫລື ສິດທິແນວອື່ນຂອງທ່ານ ແລະ ລູກຂອງທ່ານ. ເຂົາເຈົ້າຕ້ອງດັດແປງຣາຍຣະອຽດໃຫ້ຖືກຕ້ອງຕາມນັ້ນ ແລະ ຕ້ອງແຈ້ງບອກທ່ານໂດຍທາງຫນັງສື.
- ຖ້າຫາກວ່າ, ເນື່ອງເປັນຜົນອອກມາຂອງການຟັງເຣື່ອງ, ຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການຄົນນັ້ນຕັດສິນວ່າຣາຍຣະອຽດບໍ່ແມ່ນບໍ່ຖືກຕ້ອງ, ນຳພາໃຫ້ເຊື່ອໄປໃນທາງຜິດ, ຫລື ບໍ່ດັ່ງນັ້ນໃນການລ່ວງລະເມີດການປົກປິດໄວ້ເປັນຄວາມລັບ ຫລື ສິດທິອື່ນໆຂອງທ່ານ ແລະ ລູກຂອງທ່ານ, ທ່ານຕ້ອງຖືກແຈ້ງບອກກ່ຽວກັບສິດທິຂອງທ່ານທີ່ຈະເອົາໃສ່ໃນບັນທຶກຂອງລູກຂອງທ່ານ, ຄຳແຈ້ງການເວົ້າເຖິງຣາຍຣະອຽດ, ແລະ ກໍ່ຕັ້ງເຫດຜົນຕ່າງໆສຳລັບການບໍ່ເຫັນພ້ອມນຳຄຳຕັດສິນຂອງຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການ.
- ການອະທິບາຍຕ່າງໆທີ່ຖືກວາງໃສ່ໃນບັນທຶກຂອງລູກຂອງທ່ານພາຍໃຕ້ວິທີການເຫລົ່ານີ້ຕ້ອງຖືກຮັກສາໄວ້ໂດຍຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນໃຫ້ເປັນພາກສ່ວນນຶ່ງຂອງບັນທຶກຂອງລູກຂອງທ່ານນານເທົ່ານານທີ່ບັນທຶກ ຫລື ພາກສ່ວນທີ່ຖືກຄັດຄ້ານ (ພາກສ່ວນຂອງບັນທຶກຊຶ່ງທ່ານບໍ່ເຫັນພ້ອມນຳ) ໄດ້ຖືກຮັກສາໄວ້ໂດຍຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການຄົນນັ້ນ.
- ຖ້າຫາກວ່າບັນທຶກຂອງລູກຂອງທ່ານ ຫລື ພາກສ່ວນທີ່ຖືກຄັດຄ້ານໄດ້ຖືກເປີດເຜີຍໂດຍຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການຄົນນັ້ນໃຫ້ແກ່ຝ່າຍໃດຝ່າຍນຶ່ງ, ຄຳອະທິບາຍຂອງທ່ານຍັງຈະຕ້ອງຖືກເປີດເຜີຍໃຫ້ຝ່າຍນຶ່ງອີກ.

## ຄຳຍິນຍອມກ່ອນການເປີດເຜີຍ

ຄຳຍິນຍອມຂອງພໍ່ແມ່ຕ້ອງຖືກໄດ້ມາກ່ອນທີ່ຣາຍຣະອຽດທີ່ຊີ້ບອກຕົວສະເພາະຈະຖືກ:

- ເປີດເຜີຍໃຫ້ຄົນໃດຄົນນຶ່ງນອກຈາກເຈົ້າຫນ້າທີ່ຂອງຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການໃນການເກັບກຳເອົາມາ, ການຮັກສາໄວ້ ຫລື ການໃຊ້ຣາຍຣະອຽດພາຍໃຕ້ພາກ C, ນອກຈາກວ່າໄດ້ຖືກອະນຸຍາດໃຫ້ເຮັດດັ່ງນັ້ນພາຍໃຕ້ພາກ C (34 CFR 303.414) ແລະ FERPA (34 CFR 99.31); ຫລື
- ຖືກໃຊ້ສຳລັບຈຸດປະສົງແນວໃດແນວນຶ່ງນອກຈາກການສອດຄ່ອງຕາມກົດກຳນົດພາຍໃຕ້ພາກ C.

ຣາຍຣະອຽດຈາກບັນທຶກການເຂົ້າແຊກແຊງແຕ່ເລີ້ມຕົ້ນຂອງລູກຂອງທ່ານບໍ່ສາມາດຖືກເປີດເຜີຍໄດ້ໂດຍຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນໃຫ້ອົງການບ່ອນອື່ນໂດຍປາສຈາກຄຳຍິນຍອມຂອງທ່ານນອກຈາກວ່າຜູ້ຮັບເຫມົາ ຫລື ຜູ້ໃຫ້ການບໍຣິການໄດ້ຖືກອະນຸຍາດໃຫ້ເຮັດໄດ້ພາຍໃຕ້ FERPA.ຖ້າຫາກວ່າທ່ານປະຕິເສດທີ່ຈະເອົາຄຳຍິນຍອມໃຫ້, ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຈະວາງໃຊ້ວິທີການທີ່ກ່ຽວພັນນຳການປະຕິເສດ, ເຊັ່ນວ່າການອະທິບາຍໃຫ້ທ່ານຟັງວ່າການບໍ່ເອົາຄຳຍິນຍອມໃຫ້ຈະສະທ້ອນເຖິງຄວາມສາມາດຂອງລູກຂອງທ່ານທີ່ຈະຮັບເອົາການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນໄດ້ແນວໃດ, ໂດຍບໍ່ໃຫ້ວິທີການບໍ່ລຶບລ້າງສິດທິຂອງທ່ານທີ່ຈະປະຕິເສດຄຳຍິນຍອມ.

ພາຍໃຕ້ພາກ C, ESIT ຖືກບົ່ງໃຫ້ເປີດເຜີຍຊື່ ແລະ ວັນເກີດຂອງລູກຂອງທ່ານ, ຣາຍຣະອຽດຕິດຕໍ່ຂອງທ່ານ (ລວມທັງຊື່ຂອງທ່ານ, ທີ່ຢູ່, ແລະ ເລກໂທຣະສັບ) ໂດຍປາສຈາກຄຳຍິນຍອມຂອງທ່ານໄປໃຫ້ຫ້ອງການສຶກສາຂອງຣັດ (ຫ້ອງການຂອງຫົວຫນ້າຫມວດໂຮງຮຽນຫລວງ) ແລະ ຫ້ອງການສຶກສາທ້ອງຖິ່ນ (ຫມວດໂຮງຮຽນທ້ອງຖິ່ນ) ບ່ອນທີ່ລູກຂອງທ່ານອາສັຍຢູ່. ຣາຍຣະອຽດອັນນີ້ແມ່ນຕ້ອງມີເພື່ອຈະຊີ້ຕົວເດັກນ້ອຍທຸກໆຄົນທີ່ອາດຈະມີເງື່ອນໄຂໄດ້ຮັບການບໍຣິການພາຍໃຕ້ພາກ B ຂອງ IDEA.

ການປ້ອງກັນຄວາມປອດພັຍຕໍ່ລົງໄປນີ້ຕ້ອງໄດ້ຖືກວາງໃຊ້ເພື່ອຈະຮັບປະກັນການປົກປິດໄວ້ເປັນຄວາມລັບຂອງບັນທຶກ:

- ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນແຕ່ລະຄົນຕ້ອງປົກປ້ອງການປົກປິດໄວ້ເປັນຄວາມລັບ

  ຂອງຣາຍຣະອຽດທີ່ຊີ້ບອກຕົວສະເພາະໃນຂັ້ນຕອນຂອງການເກັບກຳເອົາ, ການເກັບຮັກສາໄວ້, ການເປີດເຜີຍ

  ---

  ແລະ ການທຳລາຍຖິ້ມ.
- ເຈົ້າຫນ້າທີ່ຄົນນຶ່ງຂອງຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນແຕ່ລະຄົນຕ້ອງຮັບຜິດຊອບສຳລັບການຮັບປະກັນການປົກປິດໄວ້ເປັນຄວາມລັບຂອງຣາຍຣະອຽດທີ່ຊີ້ບອກຕົວສະເພາະທຸກໆຢ່າງ.
- ທຸກໆຄົນຜູ້ທີ່ເກັບກຳເອົາ ຫລື ໃຊ້ຣາຍຣະອຽດທີ່ຊີ້ບອກຕົວສະເພາະຕ້ອງໄດ້ຮັບການຝຶກຝົນ ຫລື ຄຳຊີ້ນຳກ່ຽວກັບນະໂຍບາຍ ແລະ ວິທີການຂອງພາກ C ຂອງຣັດວໍຊິງຕັນຊຶ່ງສອດຄ່ອງນຳ IDEA ແລະ FERPA.
- ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນແຕ່ລະຄົນຕ້ອງຮັກສາ, ສຳລັບການກວດເບິ່ງຂອງສາທາຣະນະຊົນ,ລາຍຊື່ຂອງຊື່ ແລະ ຫນ້າທີ່ການປັດຈຸບັນຂອງພະນັກງານພາຍໃນຫ້ອງການ ຜູ້ທີ່ມີການເຂົ້າເຖິງຣາຍຣະອຽດທີ່ຊີ້ບອກຕົວສະເພາະ.
- ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຕ້ອງແຈ້ງບອກພໍ່ແມ່ເມື່ອເວລາຣາຍຣະອຽດທີ່ຊີ້ບອກຕົວສະເພາະໄດ້ຖືກເກັບກຳເອົາ, ຮັກສາເອົາໄວ້, ຫລື ຖືກໃຊ້ນັ້ນແມ່ນບໍ່ຕ້ອງການຕໍ່ໄປອີກແລ້ວເພື່ອຈະເອົາການບໍຣິການໃຫ້ແກ່ລູກ ຫລື ຄອບຄົວຂອງທ່ານພາຍໃຕ້ພາກ C, ເງື່ອນໄຂ GEPA ຢູ່ໃນ 20 USC 1232f, ແລະ EDGAR, 34 CFR parts 76 ແລະ 80.
- ເມື່ອໃດຣາຍຣະອຽດບໍ່ໄດ້ຕ້ອງການອີກແລ້ວສຳລັບການເອົາການບໍຣິການໃຫ້ແກ່ເດັກນ້ອຍ ຫລື ຄອບຄົວ, ຣາຍຣະອຽດຕ້ອງຖືກທຳລາຍໄປຕາມຄຳຮ້ອງຂໍຈາກພໍ່ແມ່.

ບັນທຶກຖາວອນຂອງຊື່ຂອງລູກຂອງທ່ານ, ວັນເກີດ, ຣາຍຣະອຽດຕິດຕໍ່ຫາພໍ່ແມ່ (ລວມທັງທີ່ຢູ່ ແລະ ເລກໂທຣະສັບ), ຊື່ຂອງຜູ້ປະສານງານ (FRCs), ແລະ ຜູ້ບໍຣິການເຂົ້າແຊກແຊງແຕ່ເລີ້ມແຣກ, ຂໍ້ມູນການອອກຈາກໂຄງການ (ລວມທັງປີ ແລະ ອາຍຸໃນເວລາອອກໄປ, ແລະ ໂຄງການຕ່າງໆທີ່ໄດ້ເຂົ້າໄປໃນເວລາອອກ) ຈະຖືກຮັກສາເອົາໄວ້ໂດຍປາສຈາກຂອບເຂດເວລາ.

## ວິທີການແກ້ໄຂຄວາມຂັດແຍ້ງ

ຖ້າຫາກວ່າທ່ານມີຄວາມຂ້ອງໃຈກ່ຽວກັບໂຄງການເຂົ້າແຊກແຊງແຕ່ເລີ້ມຕົ້ນຂອງລູກຂອງທ່ານ, ກະຣຸນາເລົ່າສູ່ FRC ຫລື ຄະນະທີມງານ IFSP ຟັງໂດຍໄວເທົ່າທີ່ຈະໄວໄດ້. ໂຄງການ ESIT ຊຸກຍູ້ການແກ້ໄຂບັນຫາຂັດແຍ້ງໃນຣະດັບຕ່ຳສຸດທີ່ອາດເປັນໄປໄດ້. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າຄວາມຂ້ອງໃຈບໍ່ສາມາດຖືກແກ້ໄຂໄດ້ໂດຍບໍ່ເປັນທາງການ, ທາງເລືອກໃນການແກ້ໄຂບັນຫາຂັດແຍ້ງກໍມີໄວ້ໃຫ້.

ຖ້າຫາກວ່າທ່ານບໍ່ເຫັນພ້ອມນຳຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນໃນການຊີ້ບອກຕົວ, ການຕີຣາຄາປະເມີນຜົນ, ການຈັດຫາບ່ອນຢູ່ໃຫ້ເດັກນ້ອຍຢູ່, ຫລື ເງື່ອນໄຂຂອງການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ເຫມາະສົມໃຫ້ລູກຂອງທ່ານ ຫລື ຄອບຄົວ, ທ່ານຈະຮ້ອງຂໍເອົາການແກ້ໄຂບັນຫາທັນຕາມເວລາໃນຄວາມຂ້ອງໃຈຂອງທ່ານໄດ້.

ຕໍ່ລົງໄປນີ້ແມ່ນວິທີການທາງການສາມວິທີທີ່ມີໄວ້ໃຫ້ແກ່ທ່ານສຳລັບການແກ້ໄຂບັນຫາຄວາມຂັດແຍ້ງ. ອັນນີ້ລວມເອົາການເຈຣະຈາໄກ່ເກັ່ຽ, ການຟັງເຣື່ອງດຳເນີນການທາງສານທີ່ບໍ່ລຳອຽງແລະການຮ້ອງທຸກນຳອຳນາດການປົກຄອງ.

### ການເຈຣະຈາໄກ່ເກັ່ຽ

ການເຈຣະຈາໄກ່ເກັ່ຽຈະເອົາໂອກາດໃຫ້ທ່ານເພື່ອຈະແກ້ໄຂຄວາມບໍ່ເຫັນພ້ອມນຳກັນໃນທາງແບບບໍ່ເປັນສັດຕູກັນ. ມັນແມ່ນຕາມສະມັກໃຈ ແລະຕ້ອງຖືກເຫັນພ້ອມນຳກັນຢ່າງເປັນອິດສະຣະໂດຍທັງສອງຝ່າຍ.

ຫ້ອງການນຳພາຂອງຣັດຈະກໍ່ຕັ້ງວິທີການເພື່ອຈະສະເນີໃຫ້ພໍ່ແມ່ ແລະ ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ເລືອກເອົາວ່າຈະບໍ່ໃຊ້ການດຳເນີນການເຈຣະຈາໄກ່ເກັ່ຽໃຫ້ເປັນໂອກາດທີ່ຈະພົບກັນ, ໃນເວລາ ແລະ ສະຖານທີ່ສະດວກແກ່ທ່ານ, ພ້ອມທັງພາກສ່ວນທີ່ບໍ່ໄດ້ຮັບຜົນປະໂຍດ (ຜູ້ໄກ່ເກັ່ຽທີ່ບໍ່ຂຶ້ນກັບຝ່າຍໃດ), ຜູ້ທີ່ເຮັດວຽກພາຍໃຕ້ສັນຍານຳຫ້ອງການແກ້ໄຂບັນຫາຂັດແຍ້ງ, ຫລື ສູນກາງການຝຶກຝົນ

ແລະ ລາຍລະອຽດສຳລັບພໍ່ແມ່ ຫລື ສູນກາງຊ່ວຍເຫລືອພໍ່ແມ່ໃນຊຸມນຸມຊົນຢູ່ໃນລັດ, ເພື່ອຈະອະທິບາຍຜົນປະໂຍດຂອງ, ແລະ ແນະນຳຊຸກຍູ້ການໃຊ້ໃນ, ການດຳເນີນການເຈລະຈາໄກ່ເກັ່ຽ.

ການເຈລະຈາໄກ່ເກັ່ຽຕ້ອງຖືກເຣັດໃຫ້ແລ້ວໃນແບບທັນຕາມເວລາຫລັງຈາກການໄດ້ຮັບຄຳຮ້ອງຂໍເອົາການເຈລະຈາໄກ່ເກັ່ຽໂດຍຫ້ອງການນຳພາຂອງລັດ ແລະ ຈະບໍ່ຖືກໃຊ້ເພື່ອຈະປະຕິເສດ ຫລື ຖ່ວງດຶງສິດທິຂອງທ່ານໃນການຟັງເຣື່ອງດຳເນີນການທາງສານທີ່ບໍ່ລຳອຽງ ຫລື ເພື່ອຈະປະຕິເສດສິດທິແນວອື່ນຂອງທ່ານແນວໃດແນວນຶ່ງພາຍໃຕ້ພາກ C.

ການໄກ່ເກັ່ຽຈະຖືກເຣັດຫມາຍນັດໃນແບບທັນຕາມເວລາ ແລະ ຖືກຈັດຂຶ້ນຢູ່ໃນສະຖານທີ່ສະດວກໃຫ້ແກ່ທັງສອງຝ່າຍ.ຜູ້ເຈລະຈາໄກ່ເກັ່ຽທີ່ມີຄຸນນະວຸດທິ ແລະ ບໍ່ລຳອຽງ, ຜູ້ທີ່ໄດ້ຖືກຝຶກຝົນມາໃນເທັກນິກໄກ່ເກັ່ຽທີ່ໃຊ້ຜົນໄດ້ດີ, ຈະພົບກັບທັງສອງຝ່າຍເພື່ອຈະຊ່ວຍແກ້ໄຂຄວາມຂັດແຍ້ງຢູ່ໃນບັນຍາກາດທີ່ບໍ່ເປັນທາງການ, ບໍ່ເປັນສັດຕູກັນ.

ຫ້ອງການນຳພາຂອງລັດຈະເກັບຮັກສາລາຍຊື່ຂອງຜູ້ເຈລະຈາໄກ່ເກັ່ຽທີ່ມີຄຸນນະວຸດທິຜູ້ທີ່ຮູ້ຈັກດີໃນກົດຫມາຍ ແລະ ກົດລະບຽບທີ່ກ່ຽວຂ້ອງນຳເງື່ອນໄຂຂອງການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນສຳລັບເດັກທາຣົກ ແລະ ເດັກກຳລັງຮຽນຍ່າງທີ່ມີຄວາມເສັຽອົງຄະ ແລະ ຄອບຄົວຂອງເຂົາເຈົ້າ.ຜູ້ເຈລະຈາໄກ່ເກັ່ຽຕ້ອງຖືກເລືອກເອົາໃນແບບຈົກຊື່ຂຶ້ນມາ, ຫມູນວຽນເປັນຜຽນ, ຫລື ແບບບໍ່ລຳອຽງແບບອື່ນໆ. ຫ້ອງການນຳພາຂອງລັດຈະຮັບຜິດຊອບສຳລັບຄ່າໃຊ້ຈ່າຍຂອງການເຈລະຈາໄກ່ເກັ່ຽລວມທັງຄ່າຂອງການປະຊຸມຕ່າງໆເພື່ອຈະຊຸກຍູ້ໃຫ້ມີການເຈລະຈາໄກ່ເກັ່ຽ.

ຖ້າຫາກວ່າຄວາມບໍ່ເຫັນພ້ອມນຳກັນໄດ້ຖືກແກ້ໄຂໂດຍຜ່ານການເຈລະຈາແກ້ໄຂ, ທຸກໆຝ່າຍຕ້ອງໄດ້ເຣັດສັນຍາຜູກມັດຕາມກົດຫມາຍຊຶ່ງຈະບັນລະຍາຍການແກ້ໄຂບັນຫາ ແລະ ກ່າວວ່າການເວົ້າລົມກັນທຸກໆຢ່າງທີ່ເກີດຂຶ້ນໃນລະຫວ່າງການດຳເນີນການເຈລະຈາໄກ່ເກັ່ຽຕ້ອງເປັນຄວາມລັບ ແລະ ຈະບໍ່ຖືກໃຊ້ໃຫ້ເປັນຫລັກຖານໃນການຟັງເຣື່ອງຂອງການດຳເນີນການທາງສານທີ່ບໍ່ລຳອຽງ ຫລື ການດຳເນີນການທາງປະຊາຊົນຕໍ່ມາທຸກໆຢ່າງໃນເວລາຕໍ່ມາ. ໃບສັນຍາຕ້ອງຖືກເຊັນຊື່ໃສ່ໂດຍທ່ານ ແລະ ຜູ້ຕາງຫນ້າຂອງຫ້ອງການນຳພາຂອງລັດຜູ້ທີ່ມີສິດອຳນາດທີ່ຈະເຣັດໃຫ້ອົງການ. ໃບສັນຍາການເຈລະຈາໄກ່ເກັ່ຽທີ່ຖືກເຊັນຊື່ໃສ່ແລ້ວຈະຖືກບັງຄັບໃຊ້ໄດ້ຢູ່ໃນສານຂອງລັດທີ່ມີສິດອຳນາດເທົ່າທຽມກັນ ຫລື ສານເຂດຂອງສະຫາລັດອະເມຣິກາ.

ການເຈລະຈາໄກ່ເກັ່ຽບໍ່ກີດກັ້ນທ່ານຈາກການຮ້ອງຂໍເອົາການຟັງເຣື່ອງຕາມຫລັກການສານທີ່ບໍ່ລຳອຽງໄດ້ໃນທຸກໆເວລາ. ທ່ານຈະຍື່ນຄຳຮ້ອງຂໍເອົາການເຈລະຈາໄກ່ເກັ່ຽ ແລະ ການຟັງເຣື່ອງຕາມຫລັກການສານທີ່ບໍ່ລຳອຽງພ້ອມໆກັນໄດ້ໂລດຕາມທີ່ຖືກກ່າວຢູ່ຂ້າງລຸ່ມນີ້.

## <u>ການຟັງເຣື່ອງດຳເນີນການທາງສານທີ່ບໍ່ລຳອຽງ</u>

ການຟັງເຣື່ອງຕາມຫລັກການທາງສານທີ່ບໍ່ລຳອຽງເປັນວິທີການທາງການຊຶ່ງຖືກຈັດຂຶ້ນໂດຍເຈົ້າຫນ້າທີ່ການຟັງເຣື່ອງທີ່ບໍ່ລຳອຽດ ແລະ ເປັນທາງເລືອກສຳລັບຄອບຄົວທີ່ຊອກຫາ ທາງເພື່ອຈະຍື່ນຄຳຮ້ອງທຸກສ່ວນບຸກຄົນໃນນາມຂອງລູກຂອງເຂົາເຈົ້າ.

ການຟັງເຣື່ອງຕາມຫລັກການທາງສານທີ່ບໍ່ລຳອຽງຕ້ອງຖືກເຣັດໃຫ້ແລ້ວ, ແລະ ຫນັງສືຄຳຕັດສິນຖືກເຣັດອອກມາ, ພາຍໃນ 30 ວັນຕາມປະຕິທິນ ຈາກວັນທີໄດ້ຮັບຄຳຮ້ອງຂໍ. (ການໄກ່ເກັ່ຽ, ຖ້າຖືກພະຍາຍາມ, ຕ້ອງເກີດຂຶ້ນພາຍໃນ 30 ວັນດຽວກັນ). ເຈົ້າຫນ້າທີ່ການຟັງເຣື່ອງໄດ້ຖືກແຕ່ງຕັ້ງເພື່ອດຳເນີນການຟັງເຣື່ອງຕາມຫລັກການທາງສານ.

ເຈົ້າຫນ້າທີ່ການຟັງເຣື່ອງຕ້ອງມີຄວາມຮູ້ກ່ຽວກັບເງື່ອນໄຂຂອງພາກ C ແລະ ຄວາມຕ້ອງການຂອງເດັກນ້ອຍ ແລະ ການບໍຣິການທີ່ມີໄວ້ໃຫ້ສຳລັບເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບ ແລະ ຄອບຄົວຂອງເຂົາເຈົ້າ ແລະ ປະຕິບັດຫນ້າທີ່ຕໍ່ລົງໄປນີ້:

- ຟັງການສະເນີລາຍລະອຽດທີ່ກ່ຽວຂ້ອງນຳກ່ຽວກັບຄຳຮ້ອງທຸກ, ກວດກາພິຈາຣະນາເບິ່ງລາຍລະອຽດທຸກໆຢ່າງທີ່ກ່ຽວຂ້ອງນຳບັນຫາ ແລະ ຊອກເອົາການແກ້ໄຂບັນຫາໃນຄຳຮ້ອງທຸກໃຫ້ທັນເວລາ.
- ເອົາບັນທຶກຂອງການດຳເນີນການໃຫ້ໂດຍການຄິດຄ່ານຳລັດ, ລວມທັງຫນັງສືຕັດສິນ.

> *ກ່ຽວກັບຜູ້ເຈລະຈາໄກ່ເກັ່ຽ ແລະເຈົ້າຫນ້າທີ່ການຟັງເຣື່ອງ...*
> *ຜູ້ເຈລະຈາໄກ່ເກັ່ຽ ແລະ ເຈົ້າຫນ້າທີ່ການຟັງເຣື່ອງການດຳເນີນການຕາມຫລັກການທາງສານຕ້ອງ "ບໍ່ລຳອຽງ." ບໍ່ລຳອຽງຫມາຍຄວາມວ່າບຸກຄົນທີ່ຖືກແຕ່ງຕັ້ງຕ້ອງຮັບໃຊ້ເປັນຜູ້ເຈລະຈາໄກ່ເກັ່ຽ ຫລື ເຈົ້າຫນ້າທີ່ການຟັງເຣື່ອງ: (1) ບໍ່ແມ່ນພະນັກງານຂອງຫ້ອງການນຳພາຂອງລັດ,ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ກ່ຽວພັນນຳການໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນ, ການບໍຣິການອື່ນໆ ຫລື ການເບິ່ງແຍງດູແລເດັກນ້ອຍ; ແລະ (2) ບໍ່ມີຜົນປະໂຍດສ່ວນຕົວ ຫລື ຕາມວຽກງານຊຶ່ງຈະຂັດແຍ້ງນຳຄວາມຄັດຄ້ານຂອງເຂົາເຈົ້າໃນການວາງໃຊ້ການດຳເນີນການ. ບຸກຄົນຜູ້ທີ່ມີຄຸນນະວຸດທິເປັນຜູ້ເຈລະຈາໄກ່ເກັ່ຽ ຫລື ເຈົ້າຫນ້າທີ່ການຟັງເຣື່ອງບໍ່ແມ່ນພະນັກງານຂອງຫ້ອງການນຳພາຂອງລັດ,ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນໂດຍສະເພາະຍ້ອນວ່າບຸກຄົນນັ້ນໄດ້ຖືກຈ່າຍເງິນໃຫ້ ໂດຍຫ້ອງການ ຫລືໂຄງການເພື່ອຈະວາງໃຊ້ການເຈລະຈາໄກ່ເກັ່ຽ ຫລື ເງື່ອນໄຂຂອງການຟັງເຣື່ອງການດຳເນີນການຕາມຫລັກການທາງສານ.*

ພາຍໃຕ້ພາກ C, ທ່ານໄດ້ຖືກເອົາສິດທິທີ່ຖືກເບິ່ງຢູ່ຂ້າງລຸ່ມນີ້ໃຫ້ໃນການຟັງເຣື່ອງຕາມຫລັກການທາງສານທີ່ບໍ່ລຳອຽງຕ່າງໆຊຶ່ງຖືກເຣັດພາຍໃຕ້ກົດລະບຽບເຫລົ່ານີ້.

- ທີ່ຈະຖືກຕິດຕາມ ແລະ ຖືກແນະນຳໂດຍທະນາຍຄວາມ (ໂດຍທ່ານເສັຽເງິນເອງ) ແລະ ໂດຍບຸກຄົນຜູ້ທີ່ມີຄວາມຮູ້ ຫລື ການຝຶກຝົນພິເສດກ່ຽວກັບການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນສຳລັບເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບພາຍໃຕ້ພາກ C (ໂດຍທ່ານເສັຽເງິນເອງ).
- ທີ່ຈະສະເນີຫລັກຖານ ແລະ ປະເຊີນຫນ້າ, ສອບສວນໄຕ່ຖາມ, ແລະ ທີ່ຈະບັງການເຂົ້າມາຮ່ວມຂອງພະຍານ.
- ທີ່ຈະຫ້າມບໍ່ໃຫ້ມີການສະເນີຫລັກຖານແນວໃດແນວນຶ່ງໃນການຟັງເຣື່ອງຊຶ່ງບໍ່ໄດ້ຖືກເປີດເຜີຍໃຫ້ທ່ານຮູ້ຈັກຢ່າງຫນ້ອຍຫ້າວັນຕາມປະຕິທິນກ່ອນການດຳເນີນການ.
- ທີ່ຈະເອົາມາໃຫ້ໄດ້ຫນັງສືບັນທຶກ ຫລື ແຜ່ນເອເລກໂຕຣນິກ (ຄຳເວົ້າຕໍ່ຄຳເວົ້າ) ຂອງການບັນທຶກການຟັງເຣື່ອງໂດຍບໍ່ຄິດຄ່າຕໍ່ທ່ານ.
- ທີ່ຈະເອົາມາໃຫ້ໄດ້ໃບຫນັງສືການຊອກຫາຄວາມຈິງ ແລະ ຄຳຕັດສິນໂດຍບໍ່ຄິດຄ່າຕໍ່ທ່ານ.

ການຟັງເຣື່ອງຕາມຫລັກການທາງສານທີ່ບໍ່ລຳອຽງທີ່ຖືກບັນລະຍາຍຢູ່ໃນການດຳເນີນການເຫລົ່ານີ້ຕ້ອງຖືກເຣັດໃຫ້ແລ້ວຕາມເວລາ ແລະ ສະຖານທີ່ຊຶ່ງສະດວກຕາມທີ່ເຫມາະສົມໃຫ້ແກ່ທ່ານ. ໂດຍບໍ່ກາຍເກີນ 30 ວັນຕາມປະຕິທິນຫລັງຈາກຫ້ອງການນຳພາຂອງລັດໄດ້ຮັບຄຳຮ້ອງທຸກຂອງທ່ານ, ການດຳເນີນການຕາມຫລັກການທາງສານທີ່ບໍ່ລຳອຽງຕ້ອງຖືກເຣັດໃຫ້ແລ້ວ ແລະ ຫນັງສືຕັດສິນຕ້ອງຖືກສົ່ງອອກໄປໃຫ້ທຸກໆຝ່າຍ. ເຈົ້າຫນ້າທີ່ການຟັງເຣື່ອງອາດຈະອະນຸຍາດການຕໍ່ເວລາອອກໄປອັນເຈາະຈົງກາຍເກີນ 30 ວັນຕາມຄຳຮ້ອງຂໍຂອງຝ່າຍໃດຝ່າຍນຶ່ງ. ຝ່າຍໃດຝ່າຍນຶ່ງທີ່ບໍ່ພໍໃຈນຳການຄົ້ນພົບ ແລະ ການຕັດສິນຂອງການຟັງເຣື່ອງຕາມຫລັກການທາງສານທີ່ບໍ່ລຳອຽງມີສິດທີ່ຈະນຳເອົາການຟ້ອງຮ້ອງຂຶ້ນສານໃນສານຂອງລັດ ຫລື ລັດຖະບານກາງໄດ້.

ໃນລະຫວ່າງການລໍຖ້າ (ລະຍະເວລາ) ຂອງການດຳເນີນການຕ່າງໆທີ່ກ່ຽວພັນນຳການຮ້ອງທຸກຕາມຫລັກການທາງສານ, ນອກຈາກວ່າຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນ ແລະ ທ່ານເຫັນພ້ອມນຳກັນແລ້ວ, ລູກຂອງທ່ານ ແລະ ຄອບຄົວຈະດຳເນີນທີ່ຈະຮັບເອົາການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ເຫມາະສົມຢູ່ໃນສະພາບແວດລ້ອມຊຶ່ງຖືກຊີ້ບອກຢູ່ໃນແຜນການ IFSP ຊຶ່ງທ່ານໄດ້ຍິນຍອມເຫັນພ້ອມນຳແລ້ວ.

ຖ້າຫາກວ່າຄຳຮ້ອງທຸກກ່ຽວພັນນຳຄຳຮ້ອງຂໍເອົາການບໍຣິການເບື້ອງຕົ້ນພາຍໃຕ້ພາກ C, ລູກຂອງທ່ານ ແລະ ຄອບຄົວຕ້ອງຖືກເອົາໃຫ້ການບໍຣິການທີ່ບໍ່ຢູ່ໃນການຂັດແຍ້ງກັນ.

## <u>ການຮ້ອງທຸກນຳອຳນາດການປົກຄອງ</u>

ເພີ້ມເຕີມນຳການເຈລະຈາໄກ່ເກັ່ຽ ແລະ ການດຳເນີນການຟັງເຣື່ອງຕາມຫລັກການທາງສານທີ່ຖືກເບິ່ງຢູ່ຂ້າງເທິງນີ້,ບຸກຄົນ ຫລື ອົງການລວມທັງຜູ້ທີ່ມາຈາກລັດອື່ນຈະຍື່ນຄຳຮ້ອງທຸກທີ່ຖືກເຊັນຊື່ໃສ່ແລ້ວໃສ່ຫ້ອງການຂອງຫລວງ ຫລືຜູ້ໃຫ້ການບໍຣິການເອກຊົນບ່ອນໃດບ່ອນນຶ່ງ, ລວມທັງຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຄົນໃດຄົນນຶ່ງຜູ້ທີ່ລ່ວງລະເມີດກົດກຳນົດຂອງໂຄງການພາກ C. ຫ້ອງການນຳພາຂອງລັດແຈກຢາຍຢ່າງກວ້າງຂວາງວິທີການກ່ຽວກັບການຮ້ອງທຸກຂອງລັດໃຫ້ພໍ່ແມ່ ແລະ ຜູ້ສົນໃຈຄົນອື່ນໆ, ລວມທັງສູນກາງການຝຶກຝົນ ແລະ ລາຍລະອຽດສຳລັບພໍ່ແມ່, ຫ້ອງການປ້ອງກັນ ແລະ ແນະນຳສະນັບສະນູນ, ແລະ ອົງການບ່ອນເຫມາະສົມບ່ອນອື່ນໆ.

ຄຳຮ້ອງທຸກຕ້ອງລວມເອົາ:

- ຄຳແຈ້ງການວ່າຫ້ອງການນຳພາຂອງລັດ, ຫ້ອງການຂອງຫລວງ, ຫລື ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນໄດ້ລ່ວງລະເມີດກົດກຳນົດຂອງພາກ C ຕາມທີ່ຖືກກ່າວຫາ.
- ຂໍ້ມູນຄວາມຈິງຊຶ່ງໃບແຈ້ງການໄດ້ຖືກອີງໃສ່.
- ລາຍເຊັນ ແລະ ລາຍລະອຽດຕິດຕໍ່ຫາສຳລັບບຸກຄົນຜູ້ທີ່ຍື່ນຄຳຮ້ອງທຸກ.
- ຖ້າຫາກວ່າແມ່ນການກ່າວຫາເຣື່ອງການລ່ວງລະເມີດດ້ວຍຄວາມນັບຖືຕໍ່ເດັກນ້ອຍໂດຍສະເພາະ:
  - ຊື່ ແລະ ທີ່ຢູ່ຂອງເດັກນ້ອຍບ່ອນທີ່ເດັກນ້ອຍອາສັຍຢູ່.
  - ຊື່ຂອງຜູ້ຮັບເຫມົາການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນ ຫລື ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຂອງເດັກນ້ອຍ.
  - ການບັນລະຍາຍອະທິບາຍສະພາບຂອງບັນຫາຂອງເດັກນ້ອຍລວມທັງຂໍ້ມູນຄວາມຈິງທີ່ກ່ຽວຂ້ອງນຳບັນຫາ.
  - ການແກ້ໄຂບັນຫາທີ່ຖືກວາງອອກມາຕາມທີ່ຮູ້ຈັກທີ່ສຸດ ແລະ ມີໄວ້ໃຫ້ໃນເວລາທີ່ຄຳຮ້ອງທຸກໄດ້ຖືກຍື່ນ.

**ຄຳຮ້ອງທຸກນຳອຳນາດການປົກຄອງຕ້ອງຖືກຍື່ນ ແລະ ໄດ້ຮັບໂດຍຫ້ອງການນຳພາຂອງລັດພາຍໃນນຶ່ງ (1) ປີຂອງການລ່ວງລະເມີດທີ່ຖືກກ່າວຫາ.** ບຸກຄົນ ຫລື ອົງການທີ່ຍື່ນຄຳຮ້ອງທຸກຕ້ອງສົ່ງຕໍ່ໃບໂກປີຂອງຄຳຮ້ອງທຸກໄປຫາຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຜູ້ທີ່ຮັບໃຊ້ເດັກນ້ອຍໃນເວລາດຽວກັນທີ່ຄຳຮ້ອງທຸກໄດ້ຖືກຍື່ນນຳຫ້ອງການນຳພາຂອງລັດ.

ເມື່ອໃດຫ້ອງການນຳພາຂອງລັດໄດ້ຮັບຄຳຮ້ອງທຸກແລ້ວ, ເຂົາເຈົ້າມີເວລາ 60 ວັນຕາມປະຕິທິນທີ່ຈະ:

- ທຳການສືບສວນທີ່ບໍ່ຂຶ້ນນຳໃຜ, ຢູ່ສະຖານທີ່, ຖ້າຫາກວ່າຫ້ອງການນຳພາຂອງລັດພິຈາລະນາເຫັນວ່າການສືບສວນແມ່ນຈຳເປັນຕ້ອງເຣັດ.
- ໃຫ້ໂອກາດແກ່ບຸກຄົນ ຫລື ອົງການທີ່ຍື່ນຄຳຮ້ອງທຸກທີ່ຈະສົ່ງລາຍລະອຽດເພີ້ມເຕີມເຂົ້າມາ,

ບໍ່ວ່າຈະເປັນທາງປາກເປົ່າ ຫລື ລາຍລັກອັກສອນ, ກ່ຽວກັບການກ່າວຫາຢູ່ໃນຄຳຮ້ອງທຸກ.

- ໃຫ້ໂອກາດແກ່ອົງການ/ຜູ້ໃຫ້ການບໍຣິການທີ່ຈະ ທີ່ຈະຕອບຄືນມາຕໍ່ຄຳຮ້ອງທຸກ, ລວມທັງໂດຍການ ເຫັນພ້ອມນຳຂອງຫ້ອງການນຳພາ, ແຜນການທີ່ ຈະແກ້ໄຂຄຳຮ້ອງທຸກ ແລະ ໂອກາດສຳລັບທຸກໆ ຝ່າຍທີ່ຈະເຂົ້າຮ່ວມໃນການເຈຣະຈາໄກ່ເກັ່ຽ.
- ກວດເບິ່ງຣາຍຣະອຽດທີ່ກ່ຽວຂ້ອງທຸກໆຢ່າງຄືນ ແລະ ທຳການພິຈາຣະນາທີ່ບໍ່ຂື້ນນຳໃຜເພື່ອຈະເບິ່ງວ່າການ ລ່ວງລະເມີດກົດກຳນົດຂອງພາກ C ໄດ້ເກີດຂື້ນ ຫລື ບໍ່.
- ເຮັດໃບຫນັງສືຕັດສິນອອກມາໃຫ້ຜູ້ທີ່ຍື່ນຄຳຮ້ອງທຸກ ຊຶ່ງຈະເວົ້າເຖິງຂໍ້ກ່າວຫາແຕ່ລະອັນຢູ່ໃນຄຳຮ້ອງທຸກ ແລະ ຊຶ່ງບັນຈຸການຄົ້ນພົບຂໍ້ມູນຄວາມຈິງ ແລະ ການສລູບຄວາມລວມທັງເຫດຜົນສຳ ລັບຄຳຕັດສິນສຸດທ້າຍຂອງຫ້ອງການນຳພາ.

ຖ້າຫາກວ່າຄຳຕັດສິນສຸດທ້າຍຊີ້ບອກວ່າການບໍຣິການທີ່ເຫມາະສົມ, ລວມເອົາການກະທຳແກ້ໄຂດັດແປງທີ່ເຫມາະສົມບໍ່ໄດ້ຖືກເອົາໃຫ້, ຫ້ອງການນຳພາຂອງຣັດຕ້ອງແກ້ໄຂ:

- ຄວາມຜິດພາດທີ່ຈະເອົາການບໍຣິການທີ່ເຫມາະສົມໃຫ້, ລວມທັງການກະທຳດັດແປງແກ້ໄຂທີ່ ເຫມາະສົມເພື່ອຈະຕອບສະນອງຄວາມຕ້ອງການ ຂອງລູກຂອງທ່ານຜູ້ທີ່ເປັນຜູ້ກ່ຽວຂ້ອງນຳຄຳຮ້ອງທຸກ ແລະ ຄອບຄົວຂອງທ່ານ (ເຊັ່ນວ່າການບໍຣິການທົດແທນ ຫລື ການໃຊ້ເງິນຄືນໃຫ້) ; ແລະ
- ເງື່ອນໄຂການບໍຣິການສຳລັບອະນາຄົດອັນເຫມາະ ສົມສຳລັບເດັກທາຣົກ ແລະເດັກກຳລັງຮຽນຍ່າງທີ່ ມີຄວາມເສັຽອົງຄະທຸກໆຄົນ ແລະ ຄອບຄົວຂອງເຂົາເຈົ້າ.

ຫ້ອງການນຳພາຂອງຣັດຕ້ອງລວມເອົາວິທີການສຳລັບການ ວາງໃຊ້ຄຳຕັດສິນທີ່ໃຊ້ໄດ້ຜົນດີ, ຖ້າຕ້ອງການ, ລວມທັງ ກິຈກັມການຊ່ວຍເຫລືອທາງດ້ານວິຊາການ, ການໄກ່ເກັ່ຽ ແລະ ການກະທຳດັດແປງເພື່ອຈະບັນລຸຜົນສຳເຣັດໃນການປະຕິບັດຕາມ.

ຖ້າຫາກວ່າຫນັງສືຄຳຮ້ອງທຸກໄດ້ຖືກຮັບເອົາຊຶ່ງຍັງແມ່ນເຣື່ອງ ບັນຫາຂອງການຟັງເຣື່ອງດຳເນີນການທາງສານອີກຄືກັນ, ຫລື ມີບັນຫາຫລາຍໆຢ່າງ, ຊຶ່ງຢູ່ໃນນັ້ນແນວນຶ່ງ ຫລື ຫລາຍແນວແມ່ນພາກສ່ວນຂອງການຟັງເຣື່ອງນັ້ນ, ຫ້ອງ ການນຳພາຂອງຣັດຕ້ອງປະໄວ້ທາງຂ້າງພາກສ່ວນໃດພາກ ສ່ວນນຶ່ງຂອງຄຳຮ້ອງທຸກທີ່ກຳລັງຖືກສະເນີຂື້ນມາຢູ່ໃນການ ຟັງເຣື່ອງດຳເນີນການຕາມຫລັກການທາງສານຈົນກວ່າຈະ ໄດ້ຮັບການສະລູບຄວາມຂອງການຟັງເຣື່ອງ. ເຖິງຢ່າງໃດກໍຕາມ, ບັນຫາຕ່າງໆຢູ່ໃນຄຳຮ້ອງທຸກທີ່ບໍ່ແມ່ນພາກສ່ວນໃດພາກສ່ວນ ນຶ່ງຂອງການດຳເນີນການຕາມສານຕ້ອງຖືກແກ້ໄຂພາຍ

ໃນກຳນົດເວລາ 60 ວັນຕາມປະຕິທິນ ແລະ ວິທີການຂອງການຮ້ອງ ທຸກຕາມທີ່ຖືກບັນຣະຍາຍຢູ່ໃນເອກສານອັນນີ້.

ຄຳຮ້ອງທຸກທີ່ໄດ້ຖືກຕັດສິນແລ້ວຢູ່ໃນການຟັງເຣື່ອງດຳເນີນ ການຕາມຫລັກການທາງສານທີ່ບໍ່ລຳອຽງທີ່ກ່ຽວຂ້ອງນຳ ຝ່າຍດຽວກັນ ບໍ່ສາມາດທີ່ຈະຖືກພິຈາຣະນາຢູ່ພາຍໃຕ້ວິທີ ການອັນນີ້ໄດ້. ຫ້ອງການນຳພາຂອງຣັດຕ້ອງແຈ້ງບອກຜູ້ ຮ້ອງທຸກວ່າຄຳຕັດສິນຂອງການຟັງເຣື່ອງໄດ້ຖືກຜູກມັດໃສ່ ຕາມກົດຫມາຍ.

ຄຳຮ້ອງທຸກທີ່ກ່າວຫາຄວາມຜິດພາດຂອງຫ້ອງການຂອງຫລວງ ຫລື ຜູ້ໃຫ້ການບໍຣິການເອກຊົນ (ລວມທັງຜູ້ຮັບເຫມົາການບໍຣິການເຂົ້າ ແຊກແຊງແຕ່ເລີ້ມຕົ້ນ ຫລື ຜູ້ໃຫ້ການບໍຣິການເຂົ້າແຊກແຊງ ແຕ່ເລີ້ມຕົ້ນ) ທີ່ຈະວາງໃຊ້ຄຳຕັດສິນຂອງການດຳເນີນການ ຕາມຫລັກການທາງສານຕ້ອງຖືກແກ້ໄຂໂດຍຫ້ອງການ ນຳພາຂອງຣັດ.

## ພໍ່ແມ່ຕົວແທນ

ສິດທິຂອງເດັກນ້ອຍທີ່ມີເງື່ອນໄຂໄດ້ຮັບພາຍໃຕ້ພາກ C ຖືກປົກປ້ອງຖ້າຫາກວ່າ:

- ບໍ່ມີພໍ່ແມ່ຄົນໃດສາມາດຖືກຊີ້ບອກຕົວໄດ້;
- ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນ, ຫລັງຈາກຄວາມພະຍາຍາມທີ່ສົມຄວນແລ້ວ, ບໍ່ສາມາດຊອກຫາພໍ່ແມ່ຄົນນຶ່ງໄດ້; ຫລື
- ເດັກນ້ອຍເປັນຄົນຢູ່ໃນຄວາມດູແລຂອງຣັດວໍຊິງ ຕັນພາຍໃຕ້ກົດຫມາຍຂອງຣັດ.

ບຸກຄົນໄດ້ຖືກແຕ່ງຕັ້ງໃຫ້ສະແດງຕົວເປັນ "ຕົວແທນ" ສຳລັບພໍ່ແມ່ໂດຍອີງຕາມວິທີການທີ່ຕິດຕາມມາ.

ວິທີການເຫລົ່ານີ້ລວມເອົາແບບວິທີສຳລັບການພິຈາຣະນາ ເບິ່ງວ່າເດັກນ້ອຍຕ້ອງການພໍ່ແມ່ແທນທີ່ ຫລື ບໍ່ ແລະ ການ ໃຊ້ຄວາມພະຍາຍາມອັນເຫມາະສົມທີ່ຈະແຕ່ງຕັ້ງຕົວແທນ ໃຫ້ເດັກນ້ອຍບໍ່ກາຍເກີນ 30 ວັນຕາມປະຕິທິນຫລັງຈາກ ການພິຈາຣະນາເຫັນວ່າເດັກນ້ອຍຕ້ອງການພໍ່ແມ່ຕົວແທນ.

ກົດເກນຕໍ່ລົງໄປນີ້ໄດ້ຖືກໃຊ້ໃນເວລາເລືອກເອົາພໍ່ແມ່ຕົວແທນ. ພໍ່ແມ່ຕົວແທນໄດ້ຖືກເລືອກເອົາໂດຍຜູ້ໃຫ້ການບໍຣິການເຂົ້າ ແຊກແຊງແຕ່ເລີ້ມຕົ້ນແຕ່ລະຄົນ ແລະ ຕ້ອງສອດຄ່ອງນຳ ກົດກຳນົດຕໍ່ລົງໄປນີ້:

- ບໍ່ມີຜົນປະໂຍດສ່ວນຕົວ ຫລື ຕາມວິຊາຊີບທີ່ຂັດແຍ້ງ ນຳຜົນປະໂຍດຂອງເດັກນ້ອຍທີ່ເຂົາເຈົ້າເປັນຕົວແທນ.
- ມີຄວາມຮູ້ ແລະ ຄວາມຊຳນານທີ່ຈະຮັບປະກັນ ການເປັນຕົວແທນຂອງເດັກນ້ອຍດີພຽງພໍ.
- ບໍ່ແມ່ນພະນັກງານຂອງຫ້ອງການຂອງຣັດບ່ອນໃດ; ຫລື ພະນັກງານຂອງຄົນໃດຄົນນຶ່ງຜູ້ທີ່ໃຫ້ການບໍຣິ ການເຂົ້າແຊກແຊງແຕ່ເລີ້ມຕົ້ນ, ການສຶກສາ, ການເບິ່ງແຍງດູແລ, ຫລື ການບໍຣິການອື່ນໆໃຫ້ ແກ່ເດັກນ້ອຍ ຫລືໃຫ້ແກ່ສະມາຊິກຄອບຄົວຄົນໃດ ຄົນນຶ່ງຂອງເດັກນ້ອຍ. ບຸກຄົນຜູ້ທີ່ມີເງື່ອນໄຂທີ່ຈະ ເປັນພໍ່ແມ່ຕົວແທນພາຍໃຕ້ວິທີການເຫລົ່ານີ້ບໍ່ແມ່ນ ພະນັກງານໂດຍສະເພາະຍ້ອນວ່າເຂົາເຈົ້າໄດ້ຖືກ ຈ່າຍເງິນໃຫ້ໂດຍຜູ້ໃຫ້ການບໍຣິການເຂົ້າແຊກແຊງ ແຕ່ເລີ້ມຕົ້ນເພື່ອຈະຮັບໃຊ້ເປັນພໍ່ແມ່ຕົວແທນ.

ເມື່ອເດັກນ້ອຍເປັນຄົນຢູ່ໃນຄວາມດູແລຂອງຣັດວໍຊິງຕັນ ຫລື ຖືກຈັດໃຫ້ຢູ່ໃນການເບິ່ງແຍງດູແລເດັກກຳພ້າ, ຜູ້ໃຫ້ການບໍ ຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຕ້ອງປຶກສານຳຫ້ອງການ ຫລວງທີ່ໄດ້ຖືກແຕ່ງຕັ້ງໃຫ້ການເບິ່ງແຍງດູແລເດັກນ້ອຍ.

ສຳລັບເດັກນ້ອຍຜູ້ທີ່ເປັນຄົນຢູ່ໃນຄວາມດູແລຂອງຣັດ, ແທນ ທີ່ວ່າຈະຖືກແຕ່ງຕັ້ງໂດຍຫ້ອງການຂອງຜູ້ບໍຣິການເຂົ້າແຊກ ແຊງແຕ່ເລີ້ມຕົ້ນ, ອາຍະການສານຜູ້ທີ່ຄວບຄຸມກຳກັບກໍຣະ

ນີຂອງເດັກນ້ອຍຈະແຕ່ງຕັ້ງພໍ່ແມ່ຕົວແທນໃຫ້ຟຽງແຕ່ວ່າ ການເລືອກເອົາສອດຄ່ອງນຳກົດເກນການເລືອກເອົາຢູ່ຂ້າງເທິງນີ້.

ພໍ່ແມ່ຕົວແທນມີສິດທິອັນດຽວກັນກັບພໍ່ແມ່ຄົນນຶ່ງສຳລັບຈຸດ ປະສົງທຸກໆຢ່າງພາຍໃຕ້ພາກ C.

## ຣາຍຣະອຽດການຕິດຕໍ່

ຖ້າຫາກວ່າທ່ານຕ້ອງການຣາຍຣະອຽດເພີ້ມເຕີມກ່ຽວກັບ ການປົກປ້ອງຄວາມປອດພັຍຕາມຫລັກການຂອງທ່ານ, ໃຫ້ຕິດຕໍ່ຫາຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ທ້ອງຖິ່ນຂອງທ່ານໄດ້ທີ່:

ຫລື

ຖ້າຫາກວ່າທ່ານມີແຜນທີ່ຈະຍື່ນຄຳຮ້ອງທຸກ, ຮ້ອງຂໍເອົາ ການເຈຣະຈາໄກ່ເກັ່ຽ ແລະ/ຫລື ການຟັງເຣື່ອງການດຳ ເນີນການທາງສານ, ກະຣຸນາຕິດຕໍ່ຫາໂຄງການອູ້ມຊູແຕ່ ເລີ້ມຕົ້ນສຳລັບເດັກທາຣົກ (ESIT) ໄດ້ທີ່:

Early Support for Infants and Toddlers
Department of Early Learning
PO Box 40970
Olympia, Washington 98504-0970
ໂທຣະສັບ: (360) 725-3500
FAX: (360) 725-4925
**www.del.wa.gov/esit**

## ບ່ອນຊ່ວຍເຫລືອສະນັບສະນູນພໍ່ແມ່:

Washington PAVE (Partnerships for Action, Voices for Empowerment)
6316 S. 12th St.
Tacoma, Washington 98465
ໂທຣະສັບ: 1-(800) 5-PARENT
FAX: 1-(253) 566-8052
**www.wapave.org**